ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ: 0564/ກປ

ນະຄອນຫຼວງວຽງຈັນ, ວັນທີ: 31 JAN 2024

## ແຈ້ງການ

ເຖິງ: - ທ່ານ ຫົວໜ້າ ຫ້ອງການ, ກົມ ແລະ ສະຖາບັນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້;

- ທ່ານ ຫົວໜ້າ ພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ນະຄອນຫຼວງວຽງຈັນ.

ເລື່ອງ: ເພີ່ມທະວີຄວາມຮັບຜິດຊອບ ສະກັດກັ້ນ, ຕ້ານໄຟໄໝ້ລາມປ່າ ແລະ ການບຸກລຸກທຳລາຍປ່າໄມ້ ແລະ ທີ່ດິນປ່າໄມ້.

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ຄຳສັ່ງ ຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າໄມ້, ທີ່ດິນປ່າໄມ້, ຕ້ານ ແລະ ສະກັດກັ້ນ ການບຸກລຸກທຳລາຍປ່າໄມ້, ທີ່ດິນປ່າໄມ້ ແລະ ໄຟໄໝ້ລາມປ່າ ສະບັບເລກທີ 11/ນຍ, ລົງວັນທີ 21 ກໍລະກົດ 2023;
- ອີງຕາມ ຄຳສັ່ງ ຂອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ກ່ຽວກັບການ ເພີ່ມທະວີຄວາມຮັບຜິດຊອບ ສະກັດກັ້ນໄຟໄໝ້ປ່າ ແລະ ການຖາງປ່າເຮັດໄຮ່, ບຸກເບີກເນື້ອທີ່ປ່າໄມ້ ເພື່ອທຳການຜະລິດ ສະບັບເລກທີ 0191/ກປ, ລົງວັນທີ 26 ມັງກອນ 2022;
- ອີງຕາມ ໜັງສືສະເໜີຂອງ ກົມປ່າໄມ້ ສະບັບເລກທີ 0317/ກປມ, ລົງວັນທີ 17 ມັງກອນ 2024.

ເນື່ອງຈາກວ່າ ໃນຊ່ວງລະດູແລ້ງຂອງແຕ່ລະປີ ໂດຍສະເພາະ ໃນໄລຍະ ເດືອນມັງກອນ ຫາ ເດືອນກໍລະກົດ ຂອງ ທຸກໆປີ ແມ່ນມີຄວາມສ່ຽງ ທີ່ຈະເກີດເຫດການໄຟໄໝ້ປ່າຢູ່ຫຼາຍຂົງເຂດ ໃນທົ່ວປະເທດ, ໂດຍສະເພາະ ໃນບັນດາເຂດທີ່ມີການບຸກເບີກເນື້ອທີ່ທຳການຜະລິດກະສິກຳ ຕາມລະດູການ. ສະນັ້ນ, ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 11/ນຍ, ລົງວັນທີ 21 ກໍລະກົດ 2023 ແລະ ຄຳສັ່ງ ຂອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0191/ກປ, ລົງວັນທີ 26 ມັງກອນ 2022 ຢ່າງເປັນຮູບປະທຳ, ເປັນເອກະພາບ, ມີປະສິດທິຜົນສູງ ແລະ ທັນກັບສະພາບການ,

### ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກແຈ້ງການ:

1. ໃຫ້ ຄະນະຮັບຜິດຊອບ ທີ່ຖືກແຕ່ງຕັ້ງ ຕາມຂໍ້ຕົກລົງຂອງ ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 3574/ກປ ລົງວັນທີ 10 ສິງຫາ 2023 ລົງຊຸກຍູ້ພາກສ່ວນກ່ຽວຂ້ອງ ຂັ້ນທ້ອງຖິ່ນ ເພີ່ມທະວີໃນການ ສະກັດກັ້ນ ຕ້ານໄຟໄໝ້ລາມປ່າ ປະຈຳປີ 2024 ຢ່າງເຂັ້ມງວດ.
2. ໃຫ້ ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ນະຄອນຫຼວງວຽງຈັນ ຮີບຮ້ອນສະເໜີໃຫ້ແຂວງ ອອກຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບ ຊຸກຍູ້ ຕິດຕາມ ແລະ ຈັດຕັ້ງປະຕິບັດ ຄຳສັ່ງ ສະບັບເລກທີ 11/ນຍ, ລົງວັນ



ສະແກນດ້ວຍ CamScanner

ທີ 21 ກໍລະກົດ 2023 ໂດຍໃຫ້ເລັ່ງໃສ່ ມາດຕະການປ້ອງກັນໄຟໄໝ້ລາມປ່າ ແລະ ເກັບກຳຂໍ້ມູນ ການບຸກລຸກປ່າໄມ້ ແລະ ທີ່ດິນປ່າໄມ້ ພ້ອມທັງ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໂຄສະນາເຜີຍແຜ່ ຄຳສັ່ງ ສະບັບເລກທີ 11/ນຍ, ຄຳສັ່ງ 0191/ກປ, ລົງວັນທີ 26 ມັງກອນ 2022 ຄຳແນະນຳ, ຂໍ້ກຳນົດ, ກົດລະບຽບ, ມາດຕະການ ກ່ຽວກັບ ການສະກັດກັ້ນ, ຕ້ານ, ດັບມອດໄຟໄໝ້ລາມປ່າ ແລະ ດຳເນີນຄະດີຕໍ່ຜູ້ກະທຳຜິດ ດັ່ງນີ້:

2.1 ມາດຕະການ ສະກັດກັ້ນ ແລະ ຕ້ານໄຟໄໝ້ລາມປ່າ:

1. ເກັບກຳຂໍ້ມູນ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີການຈັບຈອງທີ່ດິນປ່າໄມ້, ຖາງປ່າ ເພື່ອເຮັດການກະສິກຳ ທີ່ຢູ່ໃນຂອບເຂດທີ່ດິນປ່າໄມ້ ພ້ອມທັງ ກຳນົດເຂດທີ່ມີຄວາມສ່ຽງທີ່ຈະເກີດໄຟໄໝ້ລາມປ່າ;
2. ຈັດຕັ້ງທີມງານສະເພາະກິດ ຢູ່ແຕ່ລະບ້ານ, ເມືອງ ທີ່ມີຄວາມສ່ຽງ ທີ່ຈະເກີດໄຟໄໝ້ລາມປ່າ, ປະກອບວັດຖຸປະກອນ, ພາຫະນະ ເພື່ອດຳເນີນການກວດກາລາດຕະເວນ, ເຝົ້າລະວັງ ແລະ ສະກັດກັ້ນ ໄຟໄໝ້ລາມປ່າ ພ້ອມທັງ ວາງມາດຕະການແກ້ໄຂ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃຫ້ທັນເວລາ ເມື່ອມີເຫດການໄຟໄໝ້ລາມປ່າເກີດຂຶ້ນ ໃນແຕ່ລະຂອບເຂດພື້ນທີ່;
3. ຖ້າພົບເຫັນການຖາງປ່າຢູ່ໃນ ແລະ ນອກເຂດ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ເພື່ອບຸກເບີກເປັນພື້ນທີ່ເຮັດການຜະລິດກະສິກຳ ຕ້ອງໄດ້ເຮັດບົດບັນທຶກ ແລະ ບໍ່ໃຫ້ຈູດພື້ນທີ່ດັ່ງກ່າວໃນກໍລະນີທີ່ໄດ້ຈູດແລ້ວ ແມ່ນບໍ່ໃຫ້ສືບຕໍ່ເຮັດການຜະລິດກະສິກຳ, ຫາກຜູ້ໃດລະເມີດ ແມ່ນຈະໄດ້ນຳມາດຳເນີນຄະດີຕາມກົດໝາຍ ຢ່າງເຂັ້ມງວດ;
4. ໂຄສະນາເຜີຍແຜ່, ແນະນຳເຕັກນິກວິຊາການ, ຕິດຕາມ, ເຝົ້າລະວັງ, ມາດຕະການ, ສະກັດກັ້ນ ແລະ ຕ້ານໄຟໄໝ້ລາມປ່າ ທີ່ອາດຈະເກີດຂຶ້ນ ຍ້ອນປະຊາຊົນ ບຸກເບີກພື້ນທີ່ເຮັດການຜະລິດກະສິກຳ ແລະ ທຳມາຫາກິນ ຢູ່ໃນ ແລະ ນອກເຂດ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ.

2.2 ມາດຕະການ ດັບມອດໄຟໄໝ້ລາມປ່າ:

1. ການດັບມອດໄຟໄໝ້ລາມປ່າ ຕ້ອງໄດ້ກະກຽມວັດຖຸປະກອນ ເຊັ່ນ: ຈົກ, ຊ້ວນ, ຄາດ, ຖັງສີດນ້ຳ, ຈັກຕັດໄມ້, ຂວານ, ເລື່ອຍ, ໄຟສາຍ ແລະ ວັດຖຸປະກອນດັບມອດໄຟອື່ນໆ ທີ່ຈຳເປັນ ເພື່ອກຽມພ້ອມໃນການດັບມອດໄຟໄໝ້ລາມປ່າ ດ້ວຍວິທີການສ້າງແລວກັນໄຟ ກວ້າງຢ່າງໜ້ອຍ 5 ແມັດ, ແລວກັນໄຟຢູ່ເທິງເນີນພູຕ້ອງກວ້າງກວ່າແລວກັນໄຟຢູ່ທົ່ງພຽງ ແລະ ຖ້າເຫັນວ່າມີເຊື້ອໄຟຫຼາຍ ແລະ ມີລົມແຮງ ແລວກັນໄຟຕ້ອງໃຫ້ມີຄວາມກວ້າງຫຼາຍຂຶ້ນ;
2. ຖ້າຫາກເກີດມີເຫດການໄຟໄໝ້ລາມປ່າ ຢູ່ໃນເຂດປ່າໄມ້ຂອງ ບ້ານ ແລະ ເມືອງ ແມ່ນມອບໃຫ້ ທີມງານສະເພາະກິດຂັ້ນທ້ອງຖິ່ນ ສົມທົບກັບ ອົງການປົກຄອງບ້ານ ຫຼື ເມືອງນັ້ນ ເປັນເຈົ້າການປຸກລະດົມປະຊາຊົນ, ພະນັກງານ, ທະຫານ, ຕຳຫຼວດ ແລະ ກຳລັງອື່ນໆ ຊ່ວຍກັນດັບມອດໄຟ ແລະ ໃຫ້ຖືເອົາວຽກງານດັ່ງກ່າວ ເປັນພັນທະໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງທົ່ວປວງຊົນ;
3. ໃນກໍລະນີເກີດມີເຫດການໄຟໄໝ້ລາມປ່າຮຸນແຮງ, ເປັນບໍລິເວນກວ້າງ ແລະ ເຂົ້າຫາໄດ້ຍາກ ຕ້ອງໄດ້ປະສານຫາພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນແມ່ນ ກຳລັງປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ແຂວງທີ່ໃກ້ຄຽງ ເພື່ອຂໍຄວາມຊ່ວຍເຫຼືອໃນການດັບມອດໄຟຢ່າງທັນການ.



ສະແກນດ້ວຍ CamScanner

2.3 ມາດຕະການ ຕໍ່ຜູ້ກະທຳຜິດ:

ໃຫ້ເຈົ້າໜ້າທີ່ປ່າໄມ້ ປະສານສົມທົບກັບ ເຈົ້າໜ້າທີ່ກ່ຽວຂ້ອງຂັ້ນທ້ອງຖິ່ນ ດຳເນີນການ ເກັບກຳຂໍ້ມູນ, ຊອກຫາສາເຫດທີ່ເກີດມີການ ຖາງປ່າ, ຈູດປ່າ ທີ່ເຮັດໃຫ້ເກີດມີເຫດການໄຟໄໝ້ລາມປ່າ ແລະ ນຳຕົວຜູ້ທີ່ກ່ຽວຂ້ອງກັບເຫດການດັ່ງກ່າວ ມາດຳເນີນຄະດີຕາມກົດໝາຍ ຢ່າງເຂັ້ມງວດ.

3. ພາຍຫຼັງໄດ້ຮັບແຈ້ງການສະບັບນີ້ແລ້ວ ໃຫ້ຮີບຮ້ອນຈັດຕັ້ງປະຕິບັດ ພ້ອມທັງສະຫຼຸບລາຍງານໃຫ້ຂັ້ນເທິງຂອງຕົນໄດ້ຮັບຊາບ ຢ່າງເປັນປົກກະຕິ. ໃນການຈັດຕັ້ງປະຕິບັດຕົວຈິງ ຫາກພົບບັນຫາຫຍຸ້ງຍາກ ໃຫ້ລາຍງານເຈົ້າເມືອງ, ເຈົ້ານະຄອນ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ຕາມການແບ່ງຂັ້ນຄຸ້ມຄອງ ເພື່ອໃຫ້ທິດຊີ້ນຳຢ່າງໃກ້ຊິດ ແລະ ທັນການ.

4. ແຈ້ງການສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ປອ. ເພັດ ພົມພິພັກ

<u>ບ່ອນນຳສົ່ງ:</u>

| | |
|---|---|
| 1. ຫ້ອງວ່າການສູນກາງພັກ | 01 ສະບັບ (ເພື່ອລາຍງານ); |
| 2. ຫ້ອງວ່າການ ສນຍ | 01 ສະບັບ (ເພື່ອລາຍງານ); |
| 3. ກະຊວງ ຖວທ | 01 ສະບັບ (ເພື່ອຊ່ວຍອອກຂ່າວ); |
| 4. ຫ້ອງວ່າການແຂວງ, ນະຄອນຫຼວງ ບ່ອນລະ | 01 ສະບັບ (ເພື່ອຊີ້ນຳ); |
| 5. ເກັບຮັກສາໄວ້ | 01 ສະບັບ. |



ສະແກນດ້ວຍ CamScanner